ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 031 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 17-01-2013

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍການຂົນສົ່ງຫຼາຍຮູບແບບ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI, ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 040/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 09/ຄປຈ, ລົງວັນທີ 04 ມັງກອນ 2013;

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1. ປະກາດໃຊ້ກົດໝາຍ ວ່າດ້ວຍການຂົນສົ່ງຫຼາຍຮູບແບບ.

ມາດຕາ 2. ລັດຖະດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດແຫ່ງ ສປປ ລາວ.

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ

ເລກທີ 040 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ການຂົນສົ່ງຫຼາຍຮູບແບບ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການຂົນສົ່ງຫຼາຍຮູບແບບ ໃນວາລະກອງປະຊຸມຕອນບ່າຍຂອງວັນທີ 18 ທັນວາ 2012

**ກອງປະຊຸມໄດ້ຕົກລົງ:**

<u>ມາດຕາ 1.</u> ຮັບຮອງເອົາກົດໝາຍວ່າດ້ວຍ ການຂົນສົ່ງຫຼາຍຮູບແບບ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

<u>ມາດຕາ 2.</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 18 ທັນວາ 2012

ປະທານສະພາແຫ່ງຊາດ

**ປານີ ຢາທໍ່ຕູ້**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------------------

ສະພາແຫ່ງຊາດ　　　　　　　　　　　　　　　　　　　ເລກທີ 28 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 18 ທັນວາ 2012

# ກົດໝາຍ
# ວ່າດ້ວຍ ການຂົນສົ່ງຫຼາຍຮູບແບບ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການອະນຸຍາດ, ການຄວບຄຸມ, ການຄຸ້ມຄອງ ການຕິດຕາມ ແລະ ກວດກາ ການດຳເນີນກິດຈະການຂົນສົ່ງຫຼາຍຮູບແບບ ເພື່ອຮັບປະກັນໃຫ້ວຽກງານຂົນສົ່ງຫຼາຍຮູບແບບທັນສະໄໝ, ມີປະສິດທິຜົນ, ຍືນຍົງ ແລະ ບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ແນໃສ່ເພີ່ມຄວາມສາມາດໃນການຂົນສົ່ງ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ການຂົນສົ່ງຫຼາຍຮູບແບບ**

ການຂົນສົ່ງຫຼາຍຮູບແບບ ແມ່ນ ການຂົນສົ່ງສິນຄ້າ ທີ່ຕໍ່ເນື່ອງກັນແຕ່ສອງຮູບແບບຂຶ້ນໄປ ຊຶ່ງມີການຂົນສົ່ງທາງບົກ, ທາງລົດໄຟ, ທາງນ້ຳ, ທາງທະເລ, ທາງອາກາດ ຫຼື ທາງທໍ່ ລະຫວ່າງ ສປປ ລາວ ໄປຍັງປະເທດອື່ນ ຫຼື ຈາກປະເທດອື່ນມາຍັງ ສປປ ລາວ ບົນພື້ນຖານສັນຍາຂົນສົ່ງຫຼາຍຮູບແບບສະບັບດຽວ.

**ມາດຕາ 3 ການອະທິບາຍຄຳສັບ**

**ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:**

1. **ສິນຄ້າ ໝາຍເຖິງ** ວັດຖຸ, ສິ່ງຂອງ, ສັດ, ຜະລິດຕະພັນອື່ນ ເພື່ອຕອບສະໜອງຄວາມຕ້ອງການ ຫຼື ຄວາມຈຳເປັນຂອງຜູ້ຊົມໃຊ້ ຊຶ່ງມີຄຸນຄ່າທາງດ້ານເສດຖະກິດ ລວມທັງ ຕູ້ສິນຄ້າ, ຖົງນຂອງ, ຫີບຫໍ່, ພາຊະນະຂົນສົ່ງ ຫຼື ວັດຖຸປະກອບອື່ນທີ່ຄ້າຍຄືກັນ ທີ່ຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ບໍ່ໄດ້ສະໜອງໃຫ້;

2. **ຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ໝາຍເຖິງ** ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ເປັນເຈົ້າການ ຫຼື ຮັບຜິດຊອບແທນຜູ້ສົ່ງ ຫຼື ຜູ້ຂົນສົ່ງສິນຄ້າ ທີ່ເຂົ້າຮ່ວມໃນການດຳເນີນການຂົນສົ່ງຫຼາຍຮູບແບບ;

3. **ຜູ້ສົ່ງສິນຄ້າ ໝາຍເຖິງ** ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນເຈົ້າຂອງສິນຄ້າ ຫຼື ຜູ້ຮັບມອບໝາຍ ທີ່ເປັນຄູ່ສັນຍາຂົນສົ່ງຫຼາຍຮູບແບບ ກັບຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ;

4. **ຜູ້ສັ່ງສິນຄ້າ ໝາຍເຖິງ** ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຄວາມຕ້ອງການສິນຄ້າ ດ້ວຍການສັ່ງໃຫ້ຜູ້ທີ່ກ່ຽວຂ້ອງຈັດສົ່ງໃຫ້ຕົນ;

5. **ຜູ້ດຳເນີນການຂົນສົ່ງສິນຄ້າ ໝາຍເຖິງ** ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ຮັບຂົນສົ່ງສິນຄ້າ ຊຶ່ງອາດເປັນຜູ້ດຽວກັນກັບຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ;

6. **ການມອບສິນຄ້າໃຫ້ຂົນສົ່ງ ໝາຍເຖິງ** ການມອບສິນຄ້າຈາກຜູ້ສົ່ງສິນຄ້າ ໃຫ້ແກ່ຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ເພື່ອດຳເນີນການຂົນສົ່ງຕາມສັນຍາ;

7. **ການສົ່ງມອບສິນຄ້າ ໝາຍເຖິງ** ການມອບສິນຄ້າຈາກຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ໃຫ້ແກ່ຜູ້ຮັບສິນຄ້າ ຫຼື ບຸກຄົນທີສາມ ຫຼື ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຢູ່ປາຍທາງ ຫຼື ຢູ່ສະຖານທີ່ທີ່ໄດ້ກຳນົດໄວ້ໃນສັນຍາ ຫຼື ຢູ່ສະຖານທີ່ສົ່ງມອບ ຕາມລະບຽບກົດໝາຍ ຫຼື ຕາມປະເພນີທາງການຄ້າທີ່ເຄີຍປະຕິບັດ;

8. **ຜູ້ຮັບສິນຄ້າ ໝາຍເຖິງ** ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສິດຮັບເອົາສິນຄ້າຈາກຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ;

9. **ເອກະສານຂົນສົ່ງຫຼາຍຮູບແບບ ໝາຍເຖິງ** ໜັງສືຢັ້ງຢືນ ທີ່ຜູ້ດຳເນີນການຂົນສົ່ງຫຼາຍຮູບແບບອອກໃຫ້ແກ່ຜູ້ສົ່ງສິນຄ້າ ເພື່ອໃຊ້ເປັນຫຼັກຖານໃນການປະຕິບັດສັນຍາຂົນສົ່ງຫຼາຍຮູບແບບ;

10. **ເອກະສານໂອນໄດ້ (Negotiable) ໝາຍເຖິງ** ເອກະສານທີ່ສາມາດໃຫ້ຜູ້ມີເອກະສານຂົນສົ່ງຫຼາຍຮູບແບບຕົ້ນສະບັບ ມາຮັບເອົາສິນຄ້າໄດ້;

11. **ເອກະສານໂອນບໍ່ໄດ້ (Non-negotiable) ໝາຍເຖິງ** ເອກະສານທີ່ບໍ່ສາມາດມອບໃຫ້ຜູ້ໃດໜຶ່ງມາຮັບໄດ້ ນອກຈາກຜູ້ທີ່ຖືກບົ່ງຊີ້ໄວ້ໃນເອກະສານຂົນສົ່ງຫຼາຍຮູບແບບເທົ່ານັ້ນ;

12. **ສັນຍາຂົນສົ່ງຫຼາຍຮູບແບບ ໝາຍເຖິງ** ການຕົກລົງ ລະຫວ່າງ ຜູ້ສົ່ງສິນຄ້າ ກັບຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ກ່ຽວກັບການເຄື່ອນຍ້າຍສິນຄ້າ ຈາກ ສປປ ລາວ ໄປຍັງປະເທດອື່ນ ຫຼື ຈາກປະເທດອື່ນມາຍັງ ສປປ ລາວ;

13. **ລາຍເຊັນອີເລັກໂທຣນິກ ໝາຍເຖິງ** ການຂຽນດ້ວຍມື, ການພິມ, ການບັນທຶກ, ການສຳເນົາ, ການສົ່ງຂໍ້ຄວາມດ້ວຍເຄື່ອງມືທາງເອເລັກໂຕຣນິກ;

14. **ຫົວໜ່ວຍສິດຖອນເງິນພິເສດ** (SDR-Special Drawing Right) **ໝາຍເຖິງ** ຫົວໜ່ວຍຄິດໄລ່ການເງິນ ທີ່ກຳນົດໂດຍກອງທຶນການເງິນລະຫວ່າງປະເທດ;

15. **ເຫດສຸດວິໄສ ໝາຍເຖິງ** ເຫດການທີ່ເກີດຂຶ້ນຈາກໄພພິບັດທຳມະຊາດ ເປັນຕົ້ນ ນ້ຳຖ້ວມ, ລົມພາຍຸ, ແຜ່ນດິນໄຫວ ຫຼື ຈາກການສ້າງຂຶ້ນຂອງມະນຸດ ເປັນຕົ້ນ ການຈະລາຈົນ ທີ່ບໍ່ສາມາດຄວບຄຸມໄດ້;

16. **ການເສຍຫາຍ ໝາຍເຖິງ** ການເປ່ເພ, ການສູນຫາຍ;

17. **ການເປ່ເພ ໝາຍເຖິງ** ການແຕກຫັກ, ການບຸບບ້ຽວ, ການເສຍຮູບຊົງເດີມ, ການຈີກຂາດ ແລະ ອື່ນໆ;

18. **ໂລຈິດສະຕິກ (Logistics) ໝາຍເຖິງ** ລະບົບການຄຸ້ມຄອງບໍລິຫານຂະບວນການເຄື່ອນຍ້າຍສິນຄ້າ ທີ່ມີການວາງແຜນ, ການຄວບຄຸມ, ການເກັບຮັກສາ, ການຫຸ້ມຫໍ່, ການຄຸ່ຽນຖ່າຍ, ການຂົນສົ່ງ, ການບໍລິການ ແລະ ການສະໜອງຂໍ້ມູນຂ່າວສານທີ່ກ່ຽວຂ້ອງ ທີ່ມີປະສິດທິພາບ ແລະ ປະສິດທິຜົນ ຈາກຕົ້ນທາງໄປຍັງປາຍທາງ ຕາມຄວາມຕ້ອງການຂອງລູກຄ້າ ຢ່າງເປັນຕ່ອງໂສ້.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບການຂົນສົ່ງຫຼາຍຮູບແບບ**

ລັດ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການພັດທະນາວຽກງານຂົນສົ່ງຫຼາຍຮູບແບບ ຢູ່ ສປປ ລາວ ເພື່ອຮັບປະກັນຄຸນນະພາບ, ປະສິດທິຜົນ, ຄວາມປອດໄພ, ບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ, ໃຫ້ມີການຂະຫຍາຍຕົວ, ທັນສະໄໝ ແລະ ເຂັ້ມແຂງ ເພື່ອເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

ລັດ ຊຸກຍູ້ ແລະ ສົ່ງເສີມໃຫ້ຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ໄດ້ມີເງື່ອນໄຂເຂົ້າເຖິງແຫຼ່ງທຶນ, ພັດທະນາບຸກຄະລາກອນໃຫ້ມີຄວາມສາມາດ ໃນການດຳເນີນທຸລະກິດຂົນສົ່ງຫຼາຍຮູບແບບ ແນໃສ່ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 5 ຫຼັກການກ່ຽວກັບການຂົນສົ່ງຫຼາຍຮູບແບບ

ການຂົນສົ່ງຫຼາຍຮູບແບບ ໃຫ້ປະຕິບັດຕາມຫຼັກການ ຕົ້ນຕໍ ດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຮັບປະກັນປະສິດທິຜົນທາງດ້ານເສດຖະກິດ-ສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ;

2. ຮັບປະກັນຄວາມສະດວກ, ວ່ອງໄວ, ປອດໄພ, ໂປ່ງໃສ, ຄົບຖ້ວນ, ທັນເວລາ, ຍຸຕິທຳ ແລະ ສະເໝີພາບຕໍ່ໜ້າກົດໝາຍ;

3. ຮັບປະກັນການບໍລິການໃຫ້ໄດ້ມາດຕະຖານສາກົນ ໂດຍນຳໃຊ້ເຕັກໂນໂລຊີ ທີ່ທັນສະໄໝ;

4. ປະສານສົມທົບລະຫວ່າງຂະແໜງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຄວບຄຸມ, ຄຸ້ມຄອງ, ຕິດຕາມ, ກວດກາການຂົນສົ່ງຫຼາຍຮູບແບບ ໃຫ້ມີປະສິດທິຜົນ.

### ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງ *ປະເທດ* ທີ່ເຄື່ອນໄຫວວຽກງານຂົນສົ່ງຫຼາຍຮູບແບບ ຈາກ ສປປ ລາວ ໄປຍັງປະເທດອື່ນ ຫຼື ຈາກປະເທດອື່ນມາຍັງ ສປປ ລາວ.

ກົດໝາຍສະບັບນີ້ ບໍ່ນຳໃຊ້ສຳລັບການຂົນສົ່ງຫຼາຍຮູບແບບຢູ່ພາຍໃນປະເທດ ແລະ ການຂົນສົ່ງຜູ້ໂດຍສານ.

### ມາດຕາ 7 ການຮ່ວມມືສາກົນ

ລັດ ເປີດກວ້າງ ແລະ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຂົນສົ່ງຫຼາຍຮູບແບບ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ວິທະຍາສາດ ແລະ ເຕັກໂນໂລຊີ, ການສ້າງ ແລະ ຍົກລະດັບບຸກຄະລາກອນ, ຍາດແຍ່ງການຊ່ວຍເຫຼືອ, ການລົງທຶນ ແລະ ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການດຳເນີນການຂົນສົ່ງຫຼາຍຮູບແບບ
### ໝວດທີ 1
### ສັນຍາ ແລະ ເອກະສານຂົນສົ່ງຫຼາຍຮູບແບບ

**ມາດຕາ 8 ສັນຍາຂົນສົ່ງຫຼາຍຮູບແບບ**

**ສັນຍາຂົນສົ່ງຫຼາຍຮູບແບບ** ແມ່ນ ການຕົກລົງເປັນລາຍລັກອັກສອນ ລະຫວ່າງຜູ້ສົ່ງສິນຄ້າກັບຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ຊຶ່ງພາໃຫ້ເກີດມີ ສິດ ແລະ ພັນທະຕໍ່ກັນຕາມທີ່ໄດ້ກຳນົດໄວ້ໃນສັນຍາ ແລະ ກົດໝາຍສະບັບນີ້.

**ມາດຕາ 9 ເອກະສານຂົນສົ່ງຫຼາຍຮູບແບບ**

ເມື່ອໄດ້ຮັບສິນຄ້າແລ້ວ ຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ຕ້ອງອອກເອກະສານຂົນສົ່ງຫຼາຍຮູບແບບ ເພື່ອເປັນຫຼັກຖານຢັ້ງຢືນການຮັບເອົາສິນຄ້າຕາມຈຸດປະສົງຂອງຜູ້ສົ່ງສິນຄ້າ.

ເອກະສານດັ່ງກ່າວ ຕ້ອງມີຊື່, ລາຍເຊັນ ແລະ ຕາປະທັບ ຂອງຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ຫຼື ຜູ້ຮັບມອບສິດ ໂດຍສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 10 ເນື້ອໃນເອກະສານຂົນສົ່ງຫຼາຍຮູບແບບ**

**ເອກະສານຂົນສົ່ງຫຼາຍຮູບແບບ ມີ ເນື້ອໃນລະອຽດ ດັ່ງນີ້:**

- ລັກສະນະທົ່ວໄປຂອງສິນຄ້າ, ເຄື່ອງໝາຍຈຳເປັນທີ່ຊີ້ບອກຄຸນລັກສະນະຂອງສິນຄ້າ ເຊັ່ນ ຈຳນວນ ຫີບຫໍ່ ຫຼື ອັນ, ນ້ຳໜັກລວມ, ປະລິມານ, ຂະໜາດ, ປະເພດ, ຄວາມເປັນອັນຕະລາຍ, ການເໜົ່າເປື່ອຍໄວ ຫຼື ລາຍລະອຽດອື່ນ ທີ່ຜູ້ສົ່ງສິນຄ້າໄດ້ສະໜອງໃຫ້;
- ສະພາບພາຍນອກຂອງສິນຄ້າ;
- ຊື່ ແລະ ທີ່ຕັ້ງສຳນັກງານໃຫຍ່ຂອງຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ;
- ຊື່ຂອງຜູ້ສົ່ງສິນຄ້າ;
- ຊື່ຂອງຜູ້ຮັບສິນຄ້າ ຕາມທີ່ຜູ້ສົ່ງສິນຄ້າ ໄດ້ບົ່ງໄວ້;
- ວັນ, ເວລາ ແລະ ສະຖານທີ່ ທີ່ຜູ້ດຳເນີນການຂົນສົ່ງຫຼາຍຮູບແບບໄດ້ຮັບການມອບສົ່ງສິນຄ້າ;
- ສະຖານທີ່ສົ່ງມອບສິນຄ້າໃຫ້ຜູ້ຮັບສິນຄ້າ;
- ວັນ ຫຼື ໄລຍະເວລາສົ່ງມອບສິນຄ້າຢູ່ສະຖານທີ່ສົ່ງມອບສິນຄ້າ;
- ການບົ່ງບອກວ່າເອກະສານຂົນສົ່ງຫຼາຍຮູບແບບ ສາມາດໂອນໄດ້ ຫຼື ໂອນບໍ່ໄດ້;

- ວັນ, ເວລາ ແລະ ສະຖານທີ່ອອກເອກະສານຂົນສົ່ງຫຼາຍຮູບແບບ;

- ຊື່ ແລະ ລາຍເຊັນຂອງຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ຫຼື ຜູ້ຮັບມອບສິດ;

- ຄ່າຂົນສົ່ງຂອງແຕ່ລະຮູບແບບ, ຄ່າຂົນສົ່ງທັງໝົດ ແລະ ສະກຸນເງິນທີ່ຜູ້ສົ່ງສິນຄ້າ ຫຼື ຜູ້ຮັບສິນຄ້າຕ້ອງຊຳລະ ແກ່ຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ຕາມການຕົກລົງຂອງຄູ່ສັນຍາ;

- ລາຍລະອຽດກ່ຽວກັບເສັ້ນທາງ, ຮູບແບບການຂົນສົ່ງ ແລະ ສະຖານທີ່ຖ່າຍຖ່າຍ ຖ້າຫາກຮູ້ລ່ວງໜ້າ;

- ລາຍລະອຽດອື່ນ ຕາມການຕົກລົງຂອງຄູ່ສັນຍາ.

ໃນກໍລະນີ ເອກະສານຂົນສົ່ງຫຼາຍຮູບແບບ ຫາກຂາດເນື້ອໃນໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນວັກທີ 1 ຂອງມາດຕານີ້ ຊຶ່ງບໍ່ມີຜົນສະທ້ອນທາງດ້ານກົດໝາຍ ຕໍ່ຄຸນລັກສະນະຂອງເອກະສານດັ່ງກ່າວ ໃຫ້ຖືວ່າໃຊ້ໄດ້.

## ໝວດທີ 2
## ສິດ, ພັນທະ ແລະ ຄວາມຮັບຜິດຊອບຂອງຜູ້ສົ່ງສິນຄ້າ

### ມາດຕາ 11 ສິດຂອງຜູ້ສົ່ງສິນຄ້າ

ຜູ້ສົ່ງສິນຄ້າ ມີສິດ ຕິດຕາມ ຮັບຂໍ້ມູນຂ່າວສານ ຈາກຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ຫຼື ຜູ້ຮັບສິນຄ້າ. ໃນກໍລະນີ ສິນຄ້າທີ່ສົ່ງນັ້ນ ຫາກເສຍຫາຍ ຫຼື ຊັກຊ້າໃນການສົ່ງມອບ ກໍມີສິດທວງເອົາການໃຊ້ແທນຄ່າເສຍຫາຍດັ່ງກ່າວ ຕາມສັນຍາ ຫຼື ລະບຽບກົດໝາຍ.

### ມາດຕາ 12 ພັນທະຂອງຜູ້ສົ່ງສິນຄ້າ

ຜູ້ສົ່ງສິນຄ້າ ມີພັນທະແຈ້ງ ລັກສະນະຂອງສິນຄ້າ, ຈຳນວນຫີບຫໍ່, ເຄື່ອງໝາຍ, ເລກລຳດັບ, ນ້ຳໜັກ, ຂະໜາດ, ບໍລິມາດ, ປະລິມານ, ຖ້າມີສິນຄ້າອັນຕະລາຍ, ແຕກງ່າຍ, ເສື່ອມຄຸນ ຫຼື ເໜົ່າເປື່ອຍໄວ ກໍຕ້ອງແຈ້ງລັກສະນະຂອງສິນຄ້ານັ້ນ ໃຫ້ແກ່ຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ພ້ອມທັງແນະນຳໃຫ້ມີຄວາມລະມັດລະວັງໃນການຂົນສົ່ງ ແລະ ບັນທຶກໄສ່ເອກະສານຂົນສົ່ງຫຼາຍຮູບແບບ.

ຜູ້ສົ່ງສິນຄ້າ ມີພັນທະຈ່າຍຄ່າຂົນສົ່ງໃຫ້ຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ຢ່າງຄົບຖ້ວນ ແລະ ຖືກຕ້ອງຕາມສັນຍາ.

**ມາດຕາ 13 ຄວາມຮັບຜິດຊອບຂອງຜູ້ສົ່ງສິນຄ້າ**

ໃນກໍລະນີ ມີຄວາມເສັຍຫາຍເກີດຂຶ້ນ ຍ້ອນການບໍ່ແຈ້ງລັກສະນະຄວາມເປັນອັນຕະລາຍຂອງສິນຄ້າ ຫຼື ແຈ້ງສິນຄ້າບໍ່ຖືກຕ້ອງຕາມຕົວຈິງ ແລະ ບໍ່ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້ ຜູ້ສົ່ງສິນຄ້າ ຕ້ອງຮັບຜິດຊອບຕໍ່ຄວາມເສັຍຫາຍນັ້ນ.

## ໝວດທີ 3
## ສິດ, ພັນທະ ແລະ ຄວາມຮັບຜິດຊອບ ຂອງຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ

**ມາດຕາ 14 ສິດຂອງຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ**

**ຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ມີສິດ ດັ່ງນີ້:**

1. ທວງເອົາສິນຄ້າ ຈາກຜູ້ສົ່ງສິນຄ້າໃຫ້ຄົບຖ້ວນ ແລະ ທັນເວລາຕາມສັນຍາ;
2. ທວງເອົາຄ່າຂົນສົ່ງສິນຄ້າ ນຳຜູ້ສົ່ງສິນຄ້າ ຫຼື ຜູ້ຮັບສິນຄ້າ ຕາມທີ່ໄດ້ຕົກລົງກັນ;
3. ຕິດຕາມຂໍ້ມູນຂ່າວສານ ກ່ຽວກັບການດຳເນີນການຂົນສົ່ງສິນຄ້າ ໃນແຕ່ລະຮູບແບບ;
4. ກວດຄວາມຖືກຕ້ອງຂອງສິນຄ້າ ໃນເວລາຮັບສິນຄ້າຈາກຜູ້ສົ່ງ;
5. ທວງເອົາເງິນຄ່າຂົນສົ່ງ ແລະ ຄ່າໃຊ້ຈ່າຍອື່ນນຳ ຜູ້ສົ່ງສິນຄ້າ ຫຼື ຜູ້ຮັບສິນຄ້າ ຈຳນວນເງິນທີ່ຍັງບໍ່ພໍ;
6. ກັກສິນຄ້າໄວ້ ແລະ ແຈ້ງເປັນລາຍລັກອັກສອນໃຫ້ແກ່ຜູ້ຮັບສິນຄ້າ ໃນກໍລະນີທີ່ບໍ່ໄດ້ຮັບຄ່າຂົນສົ່ງຕາມສັນຍາ;
7. ປະມູນຂາຍສິນຄ້າທີ່ໄດ້ກັກໄວ້ນັ້ນ ພ້ອມທັງຫັກເອົາຄ່າຂົນສົ່ງ ແລະ ຄ່າໃຊ້ຈ່າຍອື່ນ ຕາມທີ່ໄດ້ບົ່ງໄວ້ໃນເອກະສານຂົນສົ່ງຫຼາຍຮູບແບບ;
8. ຈັດການກັບສິນຄ້າ ຕາມລະບຽບກົດໝາຍ ໃນກໍລະນີ ຜູ້ຮັບສິນຄ້າຫາກບໍ່ຮັບເອົາສິນຄ້າ ໂດຍບໍ່ມີເຫດຜົນ;
9. ປະຕິບັດສິດອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 15 ພັນທະຂອງຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ**

**ຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ມີ ພັນທະ ດັ່ງນີ້:**

1. ຂົນສົ່ງສິນຄ້າ ຈາກຕົ້ນທາງໄປຫາປາຍທາງ ໂດຍບໍ່ໃຫ້ມີການເສັຍຫາຍ ຫຼື ສົ່ງມອບສິນຄ້າໃຫ້ຄົບຖ້ວນ ແລະ ຖືກຕ້ອງຕາມເງື່ອນໄຂທີ່ໄດ້ບົ່ງໄວ້ໃນສັນຍາ ແລະ ເອກະສານຂົນສົ່ງຫຼາຍຮູບແບບ;

2. ສົ່ງມອບສິນຄ້າໃຫ້ແກ່ບຸກຄົນທີ່ມີເອກະສານຕົ້ນສະບັບ ຖ້າຫາກເປັນເອກະສານຂົນສົ່ງຫຼາຍຮູບແບບ ທີ່ສາມາດໂອນໄດ້;

3. ສົ່ງມອບສິນຄ້າໃຫ້ແກ່ບຸກຄົນທີ່ມີເອກະສານຕົ້ນສະບັບ ທີ່ມີລາຍເຊັນສະລັກຫຼັງຂອງຜູ້ສົ່ງສິນຄ້າ ຖ້າຫາກເປັນເອກະສານຂົນສົ່ງຫຼາຍຮູບແບບ ທີ່ສາມາດໂອນໄດ້;

4. ສົ່ງມອບສິນຄ້າໃຫ້ແກ່ບຸກຄົນທີ່ມີເອກະສານຕົ້ນສະບັບ ທີ່ອອກຊື່ຂອງຜູ້ຮັບສິນຄ້າ ໂດຍມີເອກະສານຢັ້ງຢືນ ຖ້າຫາກເປັນເອກະສານຂົນສົ່ງຫຼາຍຮູບແບບ ທີ່ສາມາດໂອນໄດ້ ຫຼື ບໍ່ສາມາດໂອນໄດ້;

5. ສົ່ງມອບສິນຄ້າໃຫ້ແກ່ບຸກຄົນຕາມການແຈ້ງຂອງຜູ້ສົ່ງສິນຄ້າ ຫຼື ຜູ້ໄດ້ຮັບມອບສິດຈາກຜູ້ສົ່ງສິນຄ້າ ຕາມທີ່ໄດ້ບົ່ງໄວ້ໃນສັນຍາຂົນສົ່ງຫຼາຍຮູບແບບ;

6. ຮັກສາຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ, ປົກປັກຮັກສາສິ່ງແວດລ້ອມ ທໍາມະຊາດ ແລະ ສັງຄົມ;

7. ສົ່ງຄືນເງິນທີ່ເຫຼືອຈາກການຂາຍສິນຄ້າທີ່ກັກໄວ້ນັ້ນໃຫ້ແກ່ຜູ້ສົ່ງສິນຄ້າ ຫຼື ຜູ້ຮັບສິນຄ້າ;

8. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

ຖ້າຜູ້ຮັບສິນຄ້າ ຫາກບໍ່ມາຮັບສິນຄ້າ ຫຼື ປະຕິເສດຮັບສິນຄ້າ ໂດຍບໍ່ມີເຫດຜົນ ຫຼື ຊັກຊ້າຮັບເອົາສິນຄ້າເກີນກໍານົດເວລາທີ່ໄດ້ບົ່ງໄວ້ໃນສັນຍາ ຫຼື ກົດໝາຍແລ້ວ ຜູ້ດໍາເນີນການຂົນສົ່ງຫຼາຍຮູບແບບສາມາດຄຸ່ມຖ່າຍສິນຄ້າລົງ, ຝາກໄວ້ໃນສະຖານທີ່ປອດໄພ ແລະ ແຈ້ງໃຫ້ຜູ້ສົ່ງສິນຄ້າໂດຍທັນທີ. ສໍາລັບສິນຄ້າເໜົ່າເປື່ອຍໄວນັ້ນ ຜູ້ດໍາເນີນການຂົນສົ່ງຫຼາຍຮູບແບບ ສາມາດນໍາເອົາສິນຄ້ານັ້ນໄປຈໍາໜ່າຍໂດຍທັນທີ, ເງິນທີ່ໄດ້ຮັບຈາກການຂາຍນັ້ນ ຕ້ອງສົ່ງຄືນໃຫ້ຜູ້ຮັບສິນຄ້າ ຫຼັງຈາກຫັກເອົາຄ່າໃຊ້ຈ່າຍ ແລະ ຄ່າເສັຍຫາຍທີ່ເກີດຂຶ້ນແລ້ວ.

**ມາດຕາ 16 ຄວາມຮັບຜິດຊອບຂອງຜູ້ດໍາເນີນການຂົນສົ່ງຫຼາຍຮູບແບບ**

**ຜູ້ດໍາເນີນການຂົນສົ່ງຫຼາຍຮູບແບບ ມີ ຄວາມຮັບຜິດຊອບ ດັ່ງນີ້:**

1. ຄຸ້ມຄອງ, ຮັກສາສິນຄ້າ ນັບແຕ່ເວລາໄດ້ຮັບເອົາສິນຄ້າຈາກຜູ້ສົ່ງສິນຄ້າ ຈົນເຖິງເວລາສົ່ງມອບສິນຄ້າໃຫ້ແກ່ຜູ້ຮັບສິນຄ້າ;

2. ໃຊ້ແທນຄ່າເສັຍຫາຍ ຂອງສິນຄ້າ ຫຼື ໃນການຊັກຊ້າສົ່ງມອບສິນຄ້າ ແທນລູກຈ້າງ, ຕົວແທນຂອງຕົນ ຫຼື ບຸກຄົນອື່ນທີ່ໄດ້ຮັບມອບສິດ ຍ້ອນຄວາມຜິດພາດ, ການກະທໍາໂດຍເຈດຕະນາ ຫຼື ດ້ວຍຄວາມບໍ່ລະມັດລະວັງຂອງພວກກ່ຽວ ເວັ້ນເສັຍແຕ່ກໍລະນີທີ່ໄດ້ກໍານົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້.

ໃນກໍລະນີທີ່ມີການຊັກຊ້າໃນການສົ່ງມອບສິນຄ້າ ຊຶ່ງບໍ່ໄດ້ກໍານົດເວລາໄວ້ໃນສັນຍາຂົນສົ່ງຫຼາຍຮູບແບບ ກໍໃຫ້ຖືເອົາກໍານົດເວລາທີ່ຜູ້ດໍາເນີນການຂົນສົ່ງສິນຄ້າ ເຄີຍໄດ້ປະຕິບັດຜ່ານມາ.

**ມາດຕາ 17 ຄວາມຮັບຜິດຊອບຕໍ່ການເສຍຫາຍຂອງສິນຄ້າ**

**ຄວາມຮັບຜິດຊອບຂອງຜູ້ດຳເນີນການຂົນສົ່ງຫຼາຍຮູບແບບຕໍ່ການເສຍຫາຍຂອງສິນຄ້າ ມີດັ່ງນີ້:**

1. ໃນກໍລະນີ ບໍ່ສາມາດຮູ້ໄດ້ວ່າ ການເສຍຫາຍ ເກີດຂຶ້ນໃນໄລຍະການຂົນສົ່ງໃນຮູບແບບໃດໜຶ່ງ:

- ຖ້າສັນຍາຂົນສົ່ງຫຼາຍຮູບແບບນັ້ນ ຫາກກວມເອົາການຂົນສົ່ງທາງທະເລ ຫຼື ທາງນ້ຳ ຈຳນວນເງິນທີ່ຕ້ອງໃຊ້ແທນສູງສຸດ ບໍ່ໃຫ້ເກີນ 666,67 SDR (ຫົກຮ້ອຍຫົກສິບຫົກຈຸດຫົກສິບເຈັດ ຫົວໜ່ວຍສິດຖອນເງິນພິເສດ) ຕໍ່ໜຶ່ງຫົວໜ່ວຍຂົນສົ່ງ ຫຼື 2 SDR (ສອງຫົວໜ່ວຍສິດຖອນເງິນພິເສດ) ຕໍ່ໜຶ່ງກິໂລກຣາມ ຂອງນ້ຳໜັກລວມຂອງສິນຄ້າທີ່ເສຍຫາຍ;

- ຖ້າສັນຍາຂົນສົ່ງຫຼາຍຮູບແບບນັ້ນ ຫາກບໍ່ກວມເອົາການຂົນສົ່ງທາງທະເລ ຫຼື ທາງນ້ຳ ຈຳນວນເງິນທີ່ຕ້ອງໃຊ້ແທນສູງສຸດ ບໍ່ໃຫ້ເກີນ 8,33 SDR (ແປດຈຸດສາມສິບສາມ ຫົວໜ່ວຍສິດຖອນເງິນພິເສດ) ຕໍ່ໜຶ່ງກິໂລກຣາມ ຂອງນ້ຳໜັກລວມຂອງສິນຄ້າທີ່ເສຍຫາຍ.

2. ໃນກໍລະນີ ທີ່ສາມາດຮູ້ໄດ້ວ່າການເສຍຫາຍ ໃນໄລຍະໃດໜຶ່ງຂອງການຂົນສົ່ງຫຼາຍຮູບແບບນັ້ນ ການໃຊ້ແທນ ໃຫ້ປະຕິບັດຕາມກົດໝາຍ ຫຼື ສົນທິສັນຍາ ແລະ ສັນຍາສາກົນ ກ່ຽວກັບຂອບເຂດຄວາມຮັບຜິດຊອບຂອງຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ທີ່ນຳໃຊ້ຢູ່ໃນປະເທດບ່ອນສິນຄ້າເສຍຫາຍ ຖ້າຫາກມີສັນຍາຂົນສົ່ງສະເພາະໃນໄລຍະນັ້ນ. ຖ້າກົດໝາຍຂອງປະເທດບ່ອນສິນຄ້າເສຍຫາຍ ຫາກບໍ່ໄດ້ກຳນົດຂອບເຂດຄວາມຮັບຜິດຊອບຂອງຜູ້ດຳເນີນການຂົນສົ່ງຫຼາຍຮູບແບບນັ້ນ ການໃຊ້ແທນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ ໃນຂໍ້ 1 ຂອງມາດຕານີ້;

3. ໃນກໍລະນີ ທີ່ຜູ້ສົ່ງສິນຄ້າຫາກໄດ້ແຈ້ງລັກສະນະ ແລະ ມູນຄ່າຂອງສິນຄ້າໄວ້ໃນເອກະສານຂົນສົ່ງຫຼາຍຮູບແບບນັ້ນ ການໃຊ້ແທນຄ່າເສຍຫາຍ ໃຫ້ປະຕິບັດຕາມມູນຄ່າຕົວຈິງຂອງສິນຄ້າຕາມທີ່ໄດ້ແຈ້ງໄວ້.

**ມາດຕາ 18 ການຍົກເວັ້ນຄວາມຮັບຜິດຊອບຂອງຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ**

**ຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ຈະໄດ້ຮັບການຍົກເວັ້ນຄວາມຮັບຜິດຊອບຕໍ່ການເສຍຫາຍຂອງ ສິນຄ້າ ຫຼື ການຊັກຊ້າ ໃນການສົ່ງມອບສິນຄ້າ ໃນກໍລະນີໃດໜຶ່ງ ດັ່ງນີ້:**

1. ເຫດສຸດວິໄສ;
2. ຄວາມຜິດ ຂອງຜູ້ສົ່ງສິນຄ້າ, ຜູ້ຮັບສິນຄ້າ, ຜູ້ຕາງໜ້າ ຫຼື ຕົວແທນຂອງພວກກ່ຽວ;

3. ຜູ້ສົ່ງສິນຄ້າ, ຜູ້ຕາງໜ້າ ຫຼື ຕົວແທນຂອງຜູ້ກ່ຽວ ມີຄວາມບົກພ່ອງໃນການຫຸ້ມຫໍ່, ການຕິດເຄື່ອງໝາຍ ແລະ ການໃສ່ເລກລຳດັບຈຳນວນສິນຄ້າບໍ່ຄົບຖ້ວນ;

4. ຄວາມບົກພ່ອງໃນການຈັດການ, ການຄຸ້ມຖ່າຍ, ການເກັບຮັກສາສິນຄ້າ ຂອງຜູ້ສົ່ງສິນຄ້າ, ຜູ້ຮັບສິນຄ້າ ຫຼື ຜູ້ຕາງໜ້າ ຫຼື ຕົວແທນຂອງພວກກ່ຽວ;

5. ຄວາມບົກພ່ອງຂອງສິນຄ້າເອງ;

6. ການປະທ້ວງ, ການປິດລ້ອມ, ການຢຸດວຽກ, ການຢຸດຈ້າງ ຫຼື ການຂາດແຮງງານ;

7. ການເສັຍຫາຍຂອງສິນຄ້າ, ການຊັກຊ້າໃນການສົ່ງມອບສິນຄ້າ ໃນໄລຍະການຂົນສົ່ງສິນຄ້າທາງທະເລ ຫຼື ທາງນ້ຳ ໃນກໍລະນີ ດັ່ງນີ້:

- ຄວາມຜິດຂອງຜູ້ບັນຊາເຮືອ ຫຼື ກຳປັ່ນ, ລູກເຮືອ ຫຼື ກຳປັ່ນ, ຜູ້ພາທາງ ຫຼື ລູກຈ້າງຂອງຜູ້ດຳເນີນການຂົນສົ່ງທາງທະເລ ຫຼື ທາງນ້ຳ ໃນການຄຸ້ມຄອງບໍລິຫານ ເຮືອ ຫຼື ກຳປັ່ນ;

- ອັກຄີໄພ ທີ່ເກີດຈາກຄວາມຜິດ ຫຼື ການສົມຮູ້ຮ່ວມຄິດຂອງຜູ້ດຳເນີນການຂົນສົ່ງທາງເຮືອ ຫຼື ກຳປັ່ນ.

ໃນກໍລະນີ ມີການເສັຍຫາຍເກີດຂຶ້ນຈາກຄວາມບົກພ່ອງທາງດ້ານເຕັກນິກຂອງເຮືອ ຫຼື ກຳປັ່ນເອງ ໃນເວລາຂົນສົ່ງ ທາງທະເລ ຫຼື ທາງນ້ຳ ຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ຈະບໍ່ມີຄວາມຮັບຜິດຊອບ.

## ໝວດທີ 4

## ສິດ, ພັນທະ ແລະ ຄວາມຮັບຜິດຊອບ ຂອງຜູ້ຮັບສິນຄ້າ

### ມາດຕາ 19 ສິດຂອງຜູ້ຮັບສິນຄ້າ

**ຜູ້ຮັບສິນຄ້າ ມີ ສິດ ດັ່ງນີ້:**

1. ຕິດຕາມ ແລະ ຮັບຂໍ້ມູນຂ່າວສານ ຈາກຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ຫຼື ຜູ້ສົ່ງສິນຄ້າ;

2. ທວງເອົາການໃຊ້ແທນຄ່າເສັຍຫາຍ ຕາມສັນຍາ ຫຼື ລະບຽບກົດໝາຍ ໃນກໍລະນີສິນຄ້າທີ່ສົ່ງນັ້ນ ຫາກຖືກເສັຍຫາຍ;

3. ຮັບເອົາສິນຄ້າ ແລະ ທວງເອົາການໃຊ້ແທນຄ່າເສັຍຫາຍ ຍ້ອນການສົ່ງມອບຊັກຊ້າ;

4. ບໍ່ຮັບ ແລະ ບໍ່ຈ່າຍຄ່າຂົນສົ່ງ ຖ້າຫາກປະຕິບັດບໍ່ໄດ້ຕາມສັນຍາ;

5. ທວງເອົາເງິນ ສ່ວນທີ່ເຫຼືອຈາກການຂາຍສິນຄ້າທີ່ກັກໄວ້ ພາຍຫຼັງໄດ້ຈ່າຍຄ່າຂົນສົ່ງ ແລະ ຄ່າໃຊ້ຈ່າຍອື່ນ ຈາກຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ.

ນອກຈາກນີ້ ໃນກໍລະນີການສົ່ງມອບສິນຄ້າ ຫາກກາຍກຳນົດ ເກົ້າສິບວັນ ນັບແຕ່ວັນສົ່ງມອບສິນຄ້າເປັນຕົ້ນໄປ ໃຫ້ຖືວ່າ ສິນຄ້ານັ້ນໄດ້ສູນຫາຍແລ້ວ ຜູ້ຮັບສິນຄ້າ ກໍມີສິດທວງເອົາການໃຊ້ແທນຄ່າເສຍຫາຍທັງໝົດ.

**ມາດຕາ 20 ພັນທະຂອງຜູ້ຮັບສິນຄ້າ**

**ຜູ້ຮັບສິນຄ້າ ມີ ພັນທະ ຕົ້ນຕໍ ດັ່ງນີ້:**

1. ກວດຮັບເອົາສິນຄ້າຕາມລາຍການ ທີ່ໄດ້ບັ່ງໄວ້ໃນເອກະສານຂົນສົ່ງຫຼາຍຮູບແບບ ເຊັ່ນ ປະເພດສິນຄ້າ, ເຄື່ອງໝາຍ, ເລກລຳດັບ, ຈຳນວນຫີບຫໍ່, ຫົວໜ່ວຍຂົນສົ່ງ, ນ້ຳໜັກລວມ, ປະລິມານ ແລະ ສະພາບຂອງສິນຄ້າ;

2. ແຈ້ງການເສັຍຫາຍຂອງສິນຄ້າເປັນລາຍລັກອັກສອນໃຫ້ແກ່ຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ພາຍໃນ ເຈັດວັນ ນັບແຕ່ວັນໄດ້ຮັບເອົາສິນຄ້າເປັນຕົ້ນໄປ;

3. ຈ່າຍຄ່າຂົນສົ່ງໃຫ້ຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ຕາມສັນຍາ ຫຼື ຕາມເອກະສານຂົນສົ່ງຫຼາຍຮູບແບບ.

**ມາດຕາ 21 ຄວາມຮັບຜິດຊອບຂອງຜູ້ຮັບສິນຄ້າ**

**ຜູ້ຮັບສິນຄ້າ ມີ ຄວາມຮັບຜິດຊອບ ດັ່ງນີ້:**

1. ຈ່າຍເພີ່ມໃຫ້ຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ໃນກໍລະນີ ເງິນໄດ້ຈາກການຂາຍສິນຄ້າທີ່ກັກໄວ້ນັ້ນ ຫາກບໍ່ພຽງພໍ ລວມທັງຄ່າໃຊ້ຈ່າຍທີ່ເກີດຂຶ້ນໃໝ່ ເຊັ່ນ ຄ່າໃຊ້ຈ່າຍໃນການປະມູນຂາຍສິນຄ້າ, ຄ່າຮັກສາສິນຄ້າ;

2. ຈ່າຍຄ່າໃຊ້ຈ່າຍ ແລະ ຄ່າເສັຍຫາຍທັງໝົດທີ່ເກີດຂຶ້ນຈາກການບໍ່ຮັບເອົາສິນຄ້າ ໂດຍບໍ່ມີເຫດຜົນນຳຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ;

3. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 5
## ການໃຊ້ແທນຄ່າເສັຍຫາຍ ຂອງສິນຄ້າ

### ມາດຕາ 22 ການຄິດໄລ່ການໃຊ້ແທນຄ່າເສັຍຫາຍ

**ການໃຊ້ແທນຄ່າເສັຍຫາຍ ຂອງສິນຄ້າ ໃຫ້ຄິດໄລ່ ດັ່ງນີ້:**

1. ຕາມລາຄາສິນຄ້າ ຢູ່ສະຖານທີ່ ແລະ ເວລາສົ່ງມອບໃຫ້ແກ່ຜູ້ຮັບສິນຄ້າ ຕາມສັນຍາຂົນສົ່ງຫຼາຍຮູບແບບ. ຖ້າຫາກບໍ່ໄດ້ກຳນົດລາຄາໃນເວລາສົ່ງມອບສິນຄ້າ ໃຫ້ຄິດໄລ່ຕາມລາຄາສິນຄ້າ ຢູ່ສະຖານທີ່ ແລະ ເວລາທີ່ຄວນຈະສົ່ງມອບສິນຄ້າໃຫ້ແກ່ຜູ້ຮັບສິນຄ້າ ຕາມທີ່ເຄີຍປະຕິບັດ;
2. ຕາມລາຄາຊື້ຂາຍສິນຄ້າໃນເວລານັ້ນ. ຖ້າຫາກບໍ່ມີລາຄາດັ່ງກ່າວ ໃຫ້ເອົາຕາມລາຄາຕົວຈິງຂອງທ້ອງຕະຫຼາດ, ຖ້າຫາກບໍ່ມີລາຄາຊື້ຂາຍສິນຄ້າ ແລະ ລາຄາຕົວຈິງຂອງທ້ອງຕະຫຼາດ ໃຫ້ເອົາຕາມລາຄາປົກກະຕິຂອງສິນຄ້າຊະນິດ ແລະ ຄຸນນະພາບດຽວກັນ.

### ມາດຕາ 23 ຫົວໜ່ວຍຂົນສົ່ງ

*ຫົວໜ່ວຍຂົນສົ່ງຫຼາຍຮູບແບບ ມີ ຫີບ, ຫໍ່, ອັນ, ກະເປົາ, ຖັງ, ຕູ້ສິນຄ້າ, ກໍ້, ໂຄ້ງ, ຄັນ, ລັງ, ໜ່ວຍ, ທ່ອນ, ແຜ່ນ, ຖ້ານຮອງ, ໂຕ ແລະ ອື່ນໆ.*

ຈຳນວນຫີບຫໍ່ ຫຼື ຫົວໜ່ວຍຂົນສົ່ງອື່ນ ທີ່ບັນຈຸໃນຕູ້ສິນຄ້າ, ຖ້ານຮອງ ຫຼື ພາຊະນະຂົນສົ່ງທີ່ຄ້າຍຄືກັນ ທີ່ໄດ້ແຈ້ງ ຫຼື ບໍ່ໄດ້ແຈ້ງໃນເອກະສານຂົນສົ່ງຫຼາຍຮູບແບບນັ້ນ ໃຫ້ຖືວ່າເປັນໜຶ່ງຫີບຫໍ່ ຫຼື ໜຶ່ງຫົວໜ່ວຍຂົນສົ່ງ.

ໃນກໍລະນີ ຕູ້ສິນຄ້າ, ຖ້ານຮອງ ຫຼື ພາຊະນະຂົນສົ່ງ ຖືກເສັຍຫາຍ ຊຶ່ງຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ບໍ່ໄດ້ເປັນເຈົ້າຂອງ ຫຼື ເປັນຜູ້ສະໜອງນັ້ນ ໃຫ້ຖືວ່າຕູ້ສິນຄ້າ, ຖ້ານຮອງ ຫຼື ພາຊະນະຂົນສົ່ງນັ້ນ ເປັນຫົວໜ່ວຍຂົນສົ່ງໜຶ່ງຕ່າງຫາກ.

### ມາດຕາ 24 ສະກຸນເງິນໃຊ້ແທນຄ່າເສັຍຫາຍ

ການໃຊ້ແທນຄ່າເສັຍຫາຍ ຂອງສິນຄ້າ ຢູ່ ສປປ ລາວ ໃຫ້ໃຊ້ແທນເປັນສະກຸນເງິນກີບ, ຖ້າການຄິດໄລ່ຫາກເປັນຫົວໜ່ວຍສິດຖອນເງິນພິເສດ ກໍໃຫ້ແລກປ່ຽນເປັນສະກຸນເງິນກີບ ໃນວັນໃຊ້ແທນ ຕາມອັດຕາແລກປ່ຽນ ໃນແຕ່ລະໄລຍະຕາມການກຳນົດຂອງທະນາຄານ ແຫ່ງ ສປປ ລາວ.

## ພາກທີ III

## ວິສາຫະກິດຂົນສົ່ງຫຼາຍຮູບແບບ

**ມາດຕາ 25 ການສ້າງຕັ້ງວິສາຫະກິດຂົນສົ່ງຫຼາຍຮູບແບບ**

ການສ້າງຕັ້ງວິສາຫະກິດຂົນສົ່ງຫຼາຍຮູບແບບ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍ ວິສາຫະກິດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 26 ເງື່ອນໄຂການສ້າງຕັ້ງວິສາຫະກິດຂົນສົ່ງຫຼາຍຮູບແບບ**

**ໃນການສ້າງຕັ້ງວິສາຫະກິດຂົນສົ່ງຫຼາຍຮູບແບບ ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ມີເງື່ອນໄຂ ດັ່ງນີ້:**

- ມີທະບຽນວິສາຫະກິດຂົນສົ່ງ ຫຼື ຈັດສົ່ງສິນຄ້າລະຫວ່າງປະເທດ;
- ມີຊັບສິນ ຢ່າງໜ້ອຍເທົ່າກັບ 80.000 SDR ( ແປດສິບພັນ ຫົວໜ່ວຍສິດຖອນເງິນພິເສດ ) ຫຼື ມີການຄໍ້າປະກັນຈາກທະນາຄານ ທີ່ມີມູນຄ່າເທົ່າທຽມກັນ;
- ມີການປະກັນໄພ ສໍາລັບການໃຊ້ຈ່າຍຄ່າເສັຍຫາຍ ຫຼື ການຊັກຊ້າໃນການສົ່ງມອບສິນຄ້າ.

ການສ້າງຕັ້ງວິສາຫະກິດຂົນສົ່ງຫຼາຍຮູບແບບ ຕ້ອງໄດ້ຮັບການກວດຜ່ານຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 27 ການເຄື່ອນໄຫວຂອງວິສາຫະກິດຂົນສົ່ງຫຼາຍຮູບແບບ**

ພາຍຫຼັງທີ່ໄດ້ຮັບການກວດຜ່ານ ຈາກກະຊວງໂຍທາທິການ ແລະ ຂົນສົ່ງແລ້ວ ຜູ້ລົງທຶນຕ້ອງໄປສະເໜີຂໍຂຶ້ນທະບຽນວິສາຫະກິດ ນໍາກະຊວງ ອຸດສາຫະກໍາ ແລະ ການຄ້າ ຈຶ່ງສາມາດດໍາເນີນທຸລະກິດໄດ້ ຕາມລະບຽບກົດໝາຍ.

ໃນການເຄື່ອນໄຫວວຽກງານຂົນສົ່ງຫຼາຍຮູບແບບຂອງປະເທດອາຊຽນ ໃຫ້ປະຕິບັດຕາມຂໍ້ຕົກລົງອາຊຽນວ່າດ້ວຍການຂົນສົ່ງຫຼາຍຮູບແບບ, ສໍາລັບວິສາຫະກິດຂົນສົ່ງຫຼາຍຮູບແບບ ຂອງປະເທດອື່ນ ທີ່ມີສັນຍາຂົນສົ່ງຫຼາຍຮູບແບບກັບ ສປປ ລາວ ໃຫ້ປະຕິບັດຕາມສັນຍາດັ່ງກ່າວ.

**ມາດຕາ 28 ການສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫຼື ສາຂາຂອງວິສາຫະກິດຂົນສົ່ງຫຼາຍຮູບແບບ**

ວິສາຫະກິດຂົນສົ່ງຫຼາຍຮູບແບບຂອງຕ່າງປະເທດທີ່ມີຈຸດປະສົງສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫຼື ສາຂາຂອງຕົນ ຢູ່ ສປປ ລາວ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

# ພາກທີ IV
# ສະມາຄົມຜູ້ຂົນສົ່ງ ແລະ ຈັດສົ່ງລະຫວ່າງປະເທດ

**ມາດຕາ 29 ການສ້າງຕັ້ງສະມາຄົມຜູ້ຂົນສົ່ງ ແລະ ຈັດສົ່ງລະຫວ່າງປະເທດ**

ເພື່ອຊຸກຍູ້ ສົ່ງເສີມການຂົນສົ່ງ ແລະ ຈັດສົ່ງລະຫວ່າງປະເທດ ຂອງ ສປປ ລາວ ໃຫ້ເປັນເຄືອຂ່າຍ, ມີຫຼາຍທາງເລືອກ, ກຳລັງແຮງ, ປະສິດທິຜົນ ແລະ ສາມາດເຊື່ອມໂຍງເຂົ້າກັບລະບົບການຂົນສົ່ງຂອງອາຊຽນ, ພາກພື້ນ ແລະ ສາກົນນັ້ນ ລັດອະນຸຍາດໃຫ້ສ້າງຕັ້ງສະມາຄົມຜູ້ຂົນສົ່ງ ແລະ ຈັດສົ່ງລະຫວ່າງປະເທດ ຊຶ່ງມີພາລະບົດບາດເຕົ້າໂຮມ ແລະ ເປັນຕົວແທນໃຫ້ຜູ້ດຳເນີນທຸລະກິດ ກ່ຽວກັບການຂົນສົ່ງ ແລະ ຈັດສົ່ງລະຫວ່າງປະເທດ ຕາມລະບຽບກົດໝາຍ, ກົດລະບຽບ ແລະ ຈັນຍາບັນວິຊາຊີບຂອງຕົນ.

ເງື່ອນໄຂ ແລະ ມາດຕະຖານຂອງການສ້າງຕັ້ງສະມາຄົມຜູ້ຂົນສົ່ງ ແລະ ຈັດສົ່ງລະຫວ່າງປະເທດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 30 ສິດ ແລະ ໜ້າທີ່ ຂອງສະມາຄົມຜູ້ຂົນສົ່ງ ແລະ ຈັດສົ່ງລະຫວ່າງປະເທດ**

**ສະມາຄົມຜູ້ຂົນສົ່ງ ແລະ ຈັດສົ່ງລະຫວ່າງປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ສຶກສາ, ຄົ້ນຄວ້າ, ສ້າງກົດລະບຽບຂອງຕົນ, ເຜີຍແຜ່ກົດໝາຍ, ລະບຽບການ ກ່ຽວກັບການຂົນສົ່ງ ແລະ ຈັດສົ່ງຢູ່ພາຍໃນປະເທດ ແລະ ລະຫວ່າງປະເທດໃຫ້ມວນຊົນ ແລະ ສະມາຊິກຂອງຕົນເຊື່ອມຊຶມ, ຮັບຮູ້ຢ່າງກວ້າງຂວາງ, ເປັນເອກະພາບໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ;

2. ສ້າງ ແລະ ປັບປຸງການຈັດຕັ້ງຂອງຕົນ ໃຫ້ເຕີບໃຫຍ່ເຂັ້ມແຂງ, ນຳໃຊ້ວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນການເຄື່ອນໄຫວວຽກງານຂົນສົ່ງ ແລະ ຈັດສົ່ງ ແນໃສ່ສົ່ງເສີມການບໍລິການ ແລະ ຖານະບົດບາດຂອງວິສາຫະກິດຂົນສົ່ງ ໃຫ້ເປັນທີ່ເຊື່ອຖື ທັງຢູ່ພາຍໃນປະເທດ ແລະ ຕ່າງປະເທດ;

3. ຊ່ວຍເຫຼືອ ແລະ ສົ່ງເສີມສະມາຊິກໃນການປະກອບອາຊີບຂອງຕົນ ໃຫ້ຈະເລີນກ້າວໜ້າ, ຄຸ້ມຄອງ ແລະ *ປົກປ້ອງຜົນປະໂຫຍດອັນຊອບທຳຂອງສະມາຊິກ* ບົນພື້ນຖານລະບຽບກົດໝາຍ;

4. ເປັນຕົວແທນໃຫ້ຜູ້ດຳເນີນການຂົນສົ່ງ, ສະເໜີຄຳເຫັນ ຕໍ່ຂະແໜງການໂຍທາທິການ ແລະ ຂົນສົ່ງ ກ່ຽວກັບວຽກງານຂົນສົ່ງ ແລະ ຈັດສົ່ງ ລະຫວ່າງປະເທດ;

5. ຕິດຕາມການເຄື່ອນໄຫວ ແລະ ໃຫ້ຄຳແນະນຳແກ່ສະມາຊິກໃນການຈັດຕັ້ງປະຕິບັດວຽກງານຂົນສົ່ງ ແລະ ຈັດສົ່ງ ລະຫວ່າງປະເທດ;

6. ແກ້ໄຂຂໍ້ຂັດແຍ່ງ ຂອງສະມາຊິກທີ່ເກີດຂຶ້ນໃນເວລາຈັດຕັ້ງປະຕິບັດວຽກງານຂົນສົ່ງ ແລະ ຈັດສົ່ງ ລະຫວ່າງປະເທດ ຕາມຄວາມຮັບຜິດຊອບຂອງຕົນ;

7. ເຂົ້າເປັນສະມາຊິກຂອງສະຫະພັນສະມາຄົມຂົນສົ່ງ ແລະ ຈັດສົ່ງອາຊຽນ ແລະ ສະຫະພັນສະມາຄົມຂົນສົ່ງ ແລະ ຈັດສົ່ງສາກົນອື່ນ;

8. ສະໜອງຂໍ້ມູນຂ່າວສານໃຫ້ສະມາຊິກຂອງຕົນ ກ່ຽວກັບການຂົນສົ່ງ ແລະ ການບໍລິການການຂົນສົ່ງ ແລະ ຕະຫຼາດຂົນສົ່ງທັງພາຍໃນ ແລະ ຕ່າງປະເທດ;

9. ປະສານສົມທົບກັບຄະນະກໍາມະການຂົນສົ່ງແຫ່ງຊາດ ເພື່ອປຶກສາຫາລື, ແລກປ່ຽນຄໍາເຫັນກ່ຽວກັບການພັດທະນາ ແລະ ການອໍານວຍຄວາມສະດວກ ວຽກງານຂົນສົ່ງ ແລະ ຈັດສົ່ງ ລະຫວ່າງປະເທດ;

10. ຈັດຕັ້ງຝຶກອົບຮົມ ຍົກລະດັບທາງດ້ານການເມືອງ-ແນວຄິດ ແລະ ດ້ານວິຊາສະເພາະ ໃຫ້ແກ່ສະມາຊິກຂອງຕົນ;

11. ພົວພັນ ຮ່ວມມືກັບຕ່າງປະເທດ ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຂົນສົ່ງ ແລະ ຈັດສົ່ງລະຫວ່າງປະເທດ ຕາມການມອບໝາຍ;

12. ສະຫຼຸບ ລາຍງານການເຄື່ອນໄຫວວຽກງານຂອງຕົນ ລວມທັງຕົວເລກສະຖິຕິ ໃຫ້ຂະແໜງການໂຍທາທິການ ແລະ ຂົນສົ່ງ ຢ່າງເປັນປົກກະຕິ;

13. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

## ພາກທີ V
## ຂໍ້ຫ້າມ

### ມາດຕາ 31 ຂໍ້ຫ້າມທົ່ວໄປ

**ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີ ພຶດຕິກໍາ ດັ່ງນີ້:**

1. ດໍາເນີນທຸລະກິດກ່ຽວກັບການຂົນສົ່ງຫຼາຍຮູບແບບ ໂດຍບໍ່ມີໃບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ ຫຼື ນໍາໃຊ້ໃບອະນຸຍາດຂອງຜູ້ອື່ນ;

2. ປອມແປງໃບອະນຸຍາດ ຫຼື ໃຫ້ສິນບົນແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງເພື່ອໃຫ້ໄດ້ໃບອະນຸຍາດດໍາເນີນທຸລະກິດກ່ຽວກັບການຂົນສົ່ງຫຼາຍຮູບແບບ;

3. ນໍາໃຊ້ຍານພາຫະນະຂົນສົ່ງທີ່ບໍ່ມີໃບທະບຽນ, ມີໃບທະບຽນບໍ່ຖືກຕ້ອງ, ບໍ່ໄດ້ມາດຕະຖານເຕັກນິກ;

4. ມີພຶດຕິກໍາອື່ນທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 32 ຂໍ້ຫ້າມສຳລັບຜູ້ສົ່ງສິນຄ້າ**

**ຫ້າມ ຜູ້ສົ່ງສິນຄ້າ ມີ ພຶດຕິກຳ ດັ່ງນີ້:**

1. ແຈ້ງຂໍ້ມູນສິນຄ້າທີ່ບໍ່ຖືກຕ້ອງຕາມສັນຍາ ແລະ ບໍ່ຖືກກັບສິນຄ້າຕົວຈິງ;
2. ປອມແປງເອກະສານຂົນສົ່ງສິນຄ້າ;
3. ແກ່ຍາວເວລາໃນການສົ່ງມອບສິນຄ້າ ຫຼື ໃນການຈ່າຍຄ່າຂົນສົ່ງ;
4. ສົ່ງມອບສິນຄ້າທີ່ເຖື່ອນ ຫຼື ຜິດກົດໝາຍ;
5. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 33 ຂໍ້ຫ້າມສຳລັບຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ**

**ຫ້າມ ຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ມີ ພຶດຕິກຳ ດັ່ງນີ້:**

1. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມປະເພດທີ່ໄດ້ຮັບອະນຸຍາດ, ທີ່ບໍ່ມີໃບອະນຸຍາດ, ທີ່ມີໃບອະນຸຍາດໝົດອາຍຸ;
2. ປິດບັງ, ບິດເບືອນຂໍ້ມູນ ກ່ຽວກັບການຂົນສົ່ງຫຼາຍຮູບແບບ;
3. ຂັດຂວາງ ການກວດສອບ ແລະ ກວດກາການຂົນສົ່ງຫຼາຍຮູບແບບ;
4. ແກ່ຍາວເວລາໃນການສົ່ງມອບສິນຄ້າໃຫ້ແກ່ຜູ້ຮັບ;
5. ສົ່ງມອບສິນຄ້າໃຫ້ແກ່ບຸກຄົນ ທີ່ບໍ່ມີສິດຮັບ;
6. ໃຫ້ ແລະ ຮັບສິນບົນ ກ່ຽວກັບການຂົນສົ່ງຫຼາຍຮູບແບບ;
7. ສັບປ່ຽນສິນຄ້າ, ຊຸກເຊື່ອງ ແລະ ເຊື່ອງອຳສິນຄ້າທີ່ຕ້ອງຫ້າມ;
8. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 34 ຂໍ້ຫ້າມສຳລັບຜູ້ຮັບສິນຄ້າ**

**ຫ້າມ ຜູ້ຮັບສິນຄ້າ ມີ ພຶດຕິກຳ ດັ່ງນີ້:**

1. ຮັບສິນຄ້າທີ່ບໍ່ແມ່ນຂອງຕົນ, ເກີນຈຳນວນທີ່ຕົນມີສິດຮັບ;
2. ແຈ້ງຂໍ້ມູນການເສຍຫາຍຂອງສິນຄ້າ ບໍ່ຖືກຕ້ອງກັບຕົວຈິງ;
3. ແກ່ຍາວເວລາໃນການຮັບສິນຄ້າ, ການຈ່າຍຄ່າຂົນສົ່ງ ແລະ ຄ່າໃຊ້ຈ່າຍອື່ນ ຕາມສັນຍາ;
4. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 35 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານຂອງລັດທີ່ກ່ຽວຂ້ອງກັບການຂົນສົ່ງຫຼາຍຮູບແບບ**

**ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານຂອງລັດທີ່ກ່ຽວຂ້ອງກັບການຂົນສົ່ງຫຼາຍຮູບແບບ ມີ ພຶດຕິກຳ ດັ່ງນີ້:**

1. ດຳເນີນທຸລະກິດ, ເປັນທີ່ປຶກສາ, ເປັນນັກວິຊາການໃຫ້ບໍລິສັດ ກ່ຽວກັບການຂົນສົ່ງຫຼາຍຮູບແບບ ທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;
2. ທວງເອົາ, ຂໍເອົາ, ຮັບສິນບົນ, ກົດໜ່ວງ ຖ່ວງດຶງ, ປອມແປງເອກະສານ ກ່ຽວກັບການຂົນສົ່ງຫຼາຍຮູບແບບ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ແລະ ພວກພ້ອງ;
3. ເມີນເສີຍ ຕໍ່ຄວາມຮັບຜິດຊອບຂອງຕົນ, ຕໍ່ການກະທຳທີ່ບໍ່ຖືກຕ້ອງຂອງຜູ້ດຳເນີນທຸລະກິດ ກ່ຽວກັບການຂົນສົ່ງຫຼາຍຮູບແບບ;
4. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບກົດໝາຍ.

## ພາກທີ VI
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 36 ຮູບການແກ້ໄຂຂໍ້ຂັດແຍ່ງ**

**ການແກ້ໄຂຂໍ້ຂັດແຍ່ງ ອາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:**

1. ການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຕັດສິນຂອງສານ;
5. ການແກ້ໄຂທີ່ມີລັກສະນະສາກົນ.

**ມາດຕາ 37 ການປະນີປະນອມ**

ໃນກໍລະນີ ເກີດຂໍ້ຂັດແຍ່ງໃນການດຳເນີນທຸລະກິດ ກ່ຽວກັບການຂົນສົ່ງຫຼາຍຮູບແບບນັ້ນ ຄູ່ກໍລະນີ ສາມາດປຶກສາຫາລື, ເຈລະຈາ ແລະ ປະນີປະນອມກັນ.

**ມາດຕາ 38 ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີ ເກີດຂໍ້ຂັດແຍ່ງໃນການດຳເນີນທຸລະກິດ ກ່ຽວກັບການຂົນສົ່ງຫຼາຍຮູບແບບນັ້ນ ຄູ່ກໍລະນີ ມີສິດສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງບ່ອນຕົນໄດ້ຮັບອະນຸຍາດນັ້ນ ເພື່ອພິຈາລະນາແກ້ໄຂຕາມລະບຽບກົດໝາຍ.

**ມາດຕາ 39 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີ ເກີດຂໍ້ຂັດແຍ່ງໃນການດຳເນີນທຸລະກິດ ກ່ຽວກັບການຂົນສົ່ງຫຼາຍຮູບແບບນັ້ນ ຄູ່ກໍລະນີ ມີສິດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂຕາມລະບຽບກົດໝາຍ.

**ມາດຕາ 40 ການຕັດສິນຂອງສານ**

ເມື່ອມີຂໍ້ຂັດແຍ່ງເກີດຂຶ້ນໃນການດຳເນີນທຸລະກິດ ກ່ຽວກັບການຂົນສົ່ງຫຼາຍຮູບແບບນັ້ນ ຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ສາມາດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມລະບຽບກົດໝາຍ.

**ມາດຕາ 41 ການແກ້ໄຂທີ່ມີລັກສະນະສາກົນ**

ໃນການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການດຳເນີນທຸລະກິດຂົນສົ່ງຫຼາຍຮູບແບບ ລະຫວ່າງຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ກັບຜູ້ສົ່ງສິນຄ້າ ຫຼື ຜູ້ຮັບສິນຄ້ານັ້ນ ຄູ່ກໍລະນີ ສາມາດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງພາຍໃນ, ຕ່າງປະເທດ ຫຼື ສາກົນຕາມການຕົກລົງກັນ ຫຼື ໃຫ້ປະຕິບັດຕາມສົນທິສັນຍາ, ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 42 ອາຍຸຄວາມໃນການຮ້ອງຟ້ອງ**

ການຮ້ອງຟ້ອງ ມີ ອາຍຸຄວາມ ເກົ້າເດືອນ ນັບແຕ່ວັນໄດ້ສົ່ງມອບສິນຄ້າ ໃຫ້ແກ່ຜູ້ຮັບສິນຄ້າເປັນຕົ້ນໄປ.

## ພາກທີ VII
## ຄະນະກຳມະການຂົນສົ່ງແຫ່ງຊາດ

**ມາດຕາ 43 ການສ້າງຕັ້ງຄະນະກຳມະການຂົນສົ່ງແຫ່ງຊາດ**

ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ການສົ່ງເສີມ ການຂົນສົ່ງທຸກປະເພດ ຂອງ ສປປ ລາວ ໃຫ້ມີຄວາມສະດວກ, ວ່ອງໄວ, ປອດໄພ, ເຊື່ອມໂຍງເຂົ້າກັບລະບົບການຂົນສົ່ງຂອງອາຊຽນ, ພາກພື້ນ ແລະ ສາກົນນັ້ນ ລັດ ສ້າງຕັ້ງຄະນະກຳມະການຂົນສົ່ງແຫ່ງຊາດ ຊຶ່ງເປັນການຈັດຕັ້ງ ທີ່ບໍ່ປະຈຳການ, ມີພາລະບົດບາດປະສານງານກັບພາຍໃນ ແລະ ຕ່າງປະເທດ ໃນການຄຸ້ມຄອງ ວຽກ

ງານຂົນສົ່ງທຸກປະເພດ ໃຫ້ມີຄວາມກ້າວໜ້າຂະຫຍາຍຕົວ ປະກອບສ່ວນເຂົ້າໃນການພັດທະ ນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 44 ໂຄງປະກອບຂອງຄະນະກຳມະການຂົນສົ່ງແຫ່ງຊາດ**

**ຄະນະກຳມະການຂົນສົ່ງແຫ່ງຊາດ ປະກອບດ້ວຍ:**

1. ລັດຖະມົນຕີວ່າການ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນປະທານ;
2. ລັດຖະມົນຕີຊ່ວຍວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ ເປັນຮອງປະທານ;
3. ລັດຖະມົນຕີຊ່ວຍວ່າການ ກະຊວງການເງິນ ເປັນກຳມະການ;
4. ລັດຖະມົນຕີຊ່ວຍວ່າການ ກະຊວງກະສິກຳ ແລະ ປ່າໄມ້ ເປັນກຳມະການ;
5. ລັດຖະມົນຕີຊ່ວຍວ່າການ ກະຊວງການຕ່າງປະເທດ ເປັນກຳມະການ;
6. ລັດຖະມົນຕີຊ່ວຍວ່າການ ກະຊວງປ້ອງກັນຄວາມສະຫງົບ ເປັນກຳມະການ;
7. ຫົວໜ້າຫ້ອງການ ຫຼື ຫົວໜ້າກົມ ຂອງກະຊວງທີ່ກ່ຽວຂ້ອງ ເປັນກຳມະການ;
8. ຕົວແທນຂອງພາກສ່ວນທຸລະກິດ ທັງພາກລັດ ແລະ ເອກະຊົນ ທີ່ກ່ຽວຂ້ອງ ເປັນກຳມະການ.

ຄະນະກຳມະການຂົນສົ່ງແຫ່ງຊາດ ຖືກແຕ່ງຕັ້ງໂດຍ ນາຍົກລັດຖະມົນຕີ ແລະ ມີກອງເລຂາຕັ້ງຢູ່ ກະຊວງໂຍທາທິການ ແລະ ຂົນສົ່ງ ຊຶ່ງຖືກແຕ່ງຕັ້ງໂດຍປະທານຄະນະກຳມະການຂົນສົ່ງແຫ່ງຊາດ.

**ມາດຕາ 45 ສິດ ແລະ ໜ້າທີ່ ຂອງຄະນະກຳມະການຂົນສົ່ງ ແຫ່ງຊາດ**

**ຄະນະກຳມະການຂົນສົ່ງແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ສຶກສາ, ຄົ້ນຄວ້ານະໂຍບາຍ, ແຜນຍຸດທະສາດ, ລະບຽບກົດໝາຍ ກ່ຽວກັບວຽກງານຂົນສົ່ງ;
2. ສ້າງແຜນການເຄື່ອນໄຫວຂອງຕົນໃນແຕ່ລະໄລຍະ ແລະ ປະສານງານກັບພາກສ່ວນອື່ນກ່ຽວກັບວຽກງານຂົນສົ່ງ;
3. ຊຸກຍູ້, ສົ່ງເສີມ ການຂົນສົ່ງທຸກປະເພດໃຫ້ມີການຂະຫຍາຍຕົວ, ການນຳໃຊ້ວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີ ທີ່ທັນສະໄໝ ແນໃສ່ເຮັດໃຫ້ການຂົນສົ່ງພາຍໃນປະເທດ ແລະ ລະຫວ່າງປະເທດ ສະດວກ, ວ່ອງໄວ, ປອດໄພ, ມີປະສິດທິຜົນ ແລະ ບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມ;
4. ຄົ້ນຄວ້າ ກຳນົດ ຕາໜ່າງເສັ້ນທາງຂົນສົ່ງ, ໂຄງສ້າງລາຄາຂົນສົ່ງທຸກຮູບແບບ ເພື່ອນຳສະເໜີລັດຖະບານພິຈາລະນາ;

5. ປະກອບຄຳເຫັນ ຕໍ່ມາດຕະຖານເຕັກນິກຂອງຍານພາຫະນະຂົນສົ່ງ ຕາມການສະເໜີຂອງພາກສ່ວນຂົນສົ່ງທີ່ກ່ຽວຂ້ອງ;

6. ຄົ້ນຄວ້າການນຳໃຊ້ເອກະສານຂົນສົ່ງ ໃຫ້ເປັນເອກະພາບ ແລະ ສາມາດເຊື່ອມໂຍງກັບລະບົບເອກະສານຂົນສົ່ງສາກົນ;

7. ຄົ້ນຄວ້າວິທີການ, ປະສານສົມທົບ, ຕິດຕາມ ແລະ ແກ້ໄຂບັນຫາຕ່າງໆ ທີ່ເປັນອຸປະສັກໃຫ້ແກ່ການຂົນສົ່ງ;

8. ພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຂົນສົ່ງ ຕາມການມອບໝາຍ;

9. ປະເມີນຜົນ, ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຂົນສົ່ງ ຕໍ່ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ລັດຖະບານ ຢ່າງເປັນປົກກະຕິ;

10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ຫຼື ການມອບໝາຍຂອງຂັ້ນເທິງ.

## ພາກທີ VIII
## ການຄຸ້ມຄອງ ແລະ ການກວດກາວຽກງານຂົນສົ່ງຫຼາຍຮູບແບບ
### ໝວດທີ 1
### ການຄຸ້ມຄອງວຽກງານຂົນສົ່ງຫຼາຍຮູບແບບ

**ມາດຕາ 46 ອົງການຄຸ້ມຄອງວຽກງານຂົນສົ່ງຫຼາຍຮູບແບບ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຂົນສົ່ງຫຼາຍຮູບແບບຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ປະສານສົມທົບກັບບັນດາກະຊວງ ຫຼື ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຂົນສົ່ງຫຼາຍຮູບແບບ ປະກອບດ້ວຍ:

1. ກະຊວງໂຍທາທິການ ແລະ ຂົນສົ່ງ;
2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນ;
3. ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ເທດສະບານ;
4. ອົງການປົກຄອງບ້ານ.

**ມາດຕາ 47 ສິດ ແລະ ໜ້າທີ່ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງວຽກງານຂົນສົ່ງຫຼາຍຮູບແບບ ກະຊວງໂຍທາທິການ ແລະ ຂົນສົ່ງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດ ແລະ ລະບຽບກົດໝາຍ ກ່ຽວກັບວຽກງານຂົນສົ່ງຫຼາຍຮູບແບບ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ມະຕິ ຂອງລັດຖະບານ ກ່ຽວກັບວຽກງານຂົນສົ່ງຫຼາຍຮູບແບບ ມາເປັນແຜນງານ, ແຜນການ ແລະ ໂຄງການ;
3. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດ ແລະ ລະບຽບກົດໝາຍ ກ່ຽວກັບວຽກງານຂົນສົ່ງຫຼາຍຮູບແບບ;
4. ຊີ້ນຳ, ຊຸກຍູ້, ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດ, ລະບຽບກົດໝາຍ, ແຜນການລົງທຶນ ແລະ ແຜນການພັດທະນາການຂົນສົ່ງ;
5. ອຳນວຍຄວາມສະດວກ ໃຫ້ແກ່ຄະນະກຳມະການຂົນສົ່ງແຫ່ງຊາດ ກ່ຽວກັບການເຄື່ອນໄຫວວຽກງານຂົນສົ່ງ ໂດຍສະເພາະ ຕອບສະໜອງງົບປະມານ, ຍານພາຫະນະ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ;
6. ຄົ້ນຄວ້າ, ກຳນົດຕົວຊີ້ວັດຜົນການດຳເນີນງານ, ກຳນົດໝາຍ ແລະ ມາດຕະຖານເຕັກນິກ ກ່ຽວກັບວຽກງານຂົນສົ່ງຫຼາຍຮູບແບບ, ເລືອກເຟັ້ນເຕັກໂນໂລຊີທີ່ເໝາະສົມ, ທັນສະໄໝ ພ້ອມທັງອອກຄຳແນະນຳໃນການຈັດຕັ້ງປະຕິບັດ;
7. ຄົ້ນຄວ້າ, ປະກອບຄຳເຫັນ ກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ກ່ຽວກັບການຂົນສົ່ງຫຼາຍຮູບແບບ;
8. ຄົ້ນຄວ້າ, ແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານໃນການດຳເນີນທຸລະກິດຂົນສົ່ງຫຼາຍຮູບແບບ;
9. ຄົ້ນຄວ້າ ພິຈາລະນາ ກ່ຽວກັບການລົງທຶນ, ການຂະຫຍາຍ, ການໂຈະ ແລະ ການຍົກເລີກກິດຈະການ ກ່ຽວກັບການຂົນສົ່ງຫຼາຍຮູບແບບ;
10. ປັບປຸງການຈັດຕັ້ງທີ່ຂຶ້ນກັບຕົນ, ສ້າງ, ບຳລຸງ, ຍົກລະດັບຄວາມຮູ້, ຄວາມສາມາດ ໃຫ້ແກ່ພະນັກງານທາງດ້ານການຂົນສົ່ງຫຼາຍຮູບແບບ;
11. ປະສານສົມທົບ ກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກັບວຽກງານຂົນສົ່ງຫຼາຍຮູບແບບ;
12. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານຂົນສົ່ງຫຼາຍຮູບແບບ;
13. ສະຫຼຸບ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຂົນສົ່ງຫຼາຍຮູບແບບ ໃຫ້ລັດຖະບານຢ່າງເປັນປົກກະຕິ;

14. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 48 ສິດ ແລະ ໜ້າທີ່ ຂອງພະແນກໄຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນ**

**ໃນການຄຸ້ມຄອງວຽກງານຂົນສົ່ງຫຼາຍຮູບແບບ ພະແນກໄຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ ແລະ ແຜນການພັດທະນາ ກ່ຽວກັບວຽກງານຂົນສົ່ງຫຼາຍຮູບແບບ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ລະບຽບກົດໝາຍ ກ່ຽວກັບວຽກງານຂົນສົ່ງຫຼາຍຮູບແບບ ພາຍໃນທ້ອງຖິ່ນຂອງຕົນ;

3. ຄຸ້ມຄອງ, ຕິດຕາມການດຳເນີນທຸລະກິດກ່ຽວກັບການຂົນສົ່ງຫຼາຍຮູບແບບ ພ້ອມທັງປະກອບຄຳເຫັນ ຕໍ່ການລົງທຶນ, ການຂະຫຍາຍ, ການໂຈະ ແລະ ການຍົກເລີກການດຳເນີນທຸລະກິດດັ່ງກ່າວ ຢູ່ພາຍໃນແຂວງ, ນະຄອນຂອງຕົນ;

4. ສັງລວມສະຖິຕິ ກ່ຽວກັບວຽກງານຂົນສົ່ງຫຼາຍຮູບແບບ ໃນທ້ອງຖິ່ນຂອງຕົນ;

5. ອຳນວຍຄວາມສະດວກ ແລະ ແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນກ່ຽວກັບການຂົນສົ່ງຫຼາຍຮູບແບບ ຕາມຄວາມຮັບຜິດຊອບຂອງຕົນ;

6. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຂົນສົ່ງຫຼາຍຮູບແບບ ຕາມການມອບໝາຍຂອງຂັ້ນເທິງ;

7. ສະຫຼຸບລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຂົນສົ່ງຫຼາຍຮູບແບບ ພາຍໃນແຂວງ, ນະຄອນຂອງຕົນ ໃຫ້ກະຊວງໄຍທາທິການ ແລະ ຂົນສົ່ງ ແລະ ອົງການປົກຄອງແຂວງ, ນະຄອນ ຢ່າງເປັນປົກກະຕິ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 49 ສິດ ແລະ ໜ້າທີ່ ຂອງຫ້ອງການ ໄຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ**

**ໃນການຄຸ້ມຄອງ ວຽກງານຂົນສົ່ງຫຼາຍຮູບແບບ ຫ້ອງການໄຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ໃຫ້ແກ່ຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ພາຍໃນເມືອງ, ເທດສະບານຂອງຕົນ;

2. ຈັດຕັ້ງປະຕິບັດແຜນງານ, ແຜນການ, ໂຄງການ ກ່ຽວກັບການຂົນສົ່ງຫຼາຍຮູບແບບ;

3. ຕິດຕາມ ຜູ້ດຳເນີນການຂົນສົ່ງຫຼາຍຮູບແບບພາຍໃນເມືອງ, ເທດສະບານ ຕາມຄວາມຮັບຜິດຊອບຂອງຕົນ;

4. ຊີ້ນຳ, ຕິດຕາມ ອົງການປົກຄອງບ້ານ ກ່ຽວກັບວຽກງານຂົນສົ່ງຫຼາຍຮູບແບບ;

5. ເກັບກຳຂໍ້ມູນ, ສະຖິຕິ ກ່ຽວກັບວຽກງານຂົນສົ່ງຫຼາຍຮູບແບບ;

6. ແກ້ໄຂຂໍ້ຂັດແຍ່ງ ທີ່ເກີດຂຶ້ນກ່ຽວກັບການຂົນສົ່ງຫຼາຍຮູບແບບ ຕາມຄວາມຮັບຜິດຊອບຂອງຕົນ;

7. ສະຫຼຸບ ລາຍງານການເຄື່ອນໄຫວວຽກງານຂອງຕົນ ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນ ແລະ ອົງການປົກຄອງເມືອງ, ເທດສະບານຢ່າງເປັນປົກກະຕິ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 50 ສິດ ແລະ ໜ້າທີ່ ຂອງ ອົງການປົກຄອງບ້ານ**

**ໃນການຄຸ້ມຄອງວຽກງານຂົນສົ່ງຫຼາຍຮູບແບບ ອົງການປົກຄອງບ້ານ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:**

1. ເຜີຍແຜ່ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ ກ່ຽວກັບການຂົນສົ່ງ ໃຫ້ແກ່ປະຊາຊົນພາຍໃນຂອບເຂດບ້ານຂອງຕົນ;

2. ໃຫ້ຄວາມຮ່ວມມື, ອຳນວຍຄວາມສະດວກ ແລະ ໃຫ້ຄວາມປອດໄພແກ່ວຽກງານຂົນສົ່ງ;

3. ຕິດຕາມ ແລະ ລາຍງານສະພາບການກ່ຽວກັບວຽກງານຂົນສົ່ງ ໃນຂອບເຂດບ້ານຂອງຕົນ.

## ໝວດທີ 2

## ການກວດກາວຽກງານຂົນສົ່ງຫຼາຍຮູບແບບ

**ມາດຕາ 51 ອົງການກວດກາວຽກງານຂົນສົ່ງຫຼາຍຮູບແບບ**

**ອົງການກວດກາວຽກງານຂົນສົ່ງຫຼາຍຮູບແບບ ມີ ສອງ ປະເພດ ດັ່ງນີ້:**

1. ອົງການກວດກາພາຍໃນ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານຂົນສົ່ງຫຼາຍຮູບແບບ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 46 ຂອງກົດໝາຍສະບັບນີ້.

2. ອົງການກວດກາພາຍນອກ:

- ສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງສະພາແຫ່ງຊາດ;

- ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫລວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການກວດກາລັດ;

- ອົງການກວດສອບແຫ່ງລັດ ຕາມທີ່ໄດ້ກຳນົດໃນກົດໝາຍວ່າດ້ວຍ ການກວດສອບແຫ່ງລັດ;

- ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ ແລະ ສື່ມວນຊົນ.

ການກວດກາພາຍນອກ ມີຈຸດປະສົງ ກວດກາການປະຕິບັດໜ້າທີ່ຂອງອົງການຄຸ້ມຄອງ ແລະ ກວດກາວຽກງານຂົນສົ່ງຫຼາຍຮູບແບບ ເພື່ອໃຫ້ມີຄວາມເຂັ້ມແຂງ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ.

**ມາດຕາ 52 ສິດ ແລະ ໜ້າທີ່ ຂອງອົງການກວດກາວຽກງານຂົນສົ່ງຫຼາຍຮູບແບບ**

ອົງການກວດກາວຽກງານຂົນສົ່ງຫຼາຍຮູບແບບ ມີ ສິດ ແລະ ໜ້າທີ່ ປະຕິບັດຕາມເນື້ອໃນ ແລະ ຮູບການທີ່ໄດ້ກຳນົດໄວ້ ໃນມາດຕາ 53 ແລະ 54 ຂອງກົດໝາຍສະບັບນີ້.

**ມາດຕາ 53 ເນື້ອໃນການກວດກາວຽກງານຂົນສົ່ງຫຼາຍຮູບແບບ**

**ການກວດກາວຽກງານຂົນສົ່ງຫຼາຍຮູບແບບ ມີ ເນື້ອໃນ ຕົ້ນຕໍ ດັ່ງນີ້:**

1. ກວດກາການຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ລະບຽບກົດໝາຍ, ແຜນການລົງທຶນ, ການພັດທະນາ ແລະ ການບູລະນະຮັກສາພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກ ກ່ຽວກັບວຽກງານຂົນສົ່ງຫຼາຍຮູບແບບ;

2. ກວດກາການເຄື່ອນໄຫວ ຂອງຜູ້ດຳເນີນການຂົນສົ່ງຫຼາຍຮູບແບບ ແລະ ສະມາຄົມຜູ້ຂົນສົ່ງ ແລະ ຈັດສົ່ງລະຫວ່າງປະເທດ;

3. ກວດກາການນຳໃຊ້ມາດຕະຖານເຕັກນິກ ຂອງຍານພາຫະນະ, ອຸປະກອນທຸກປະເພດ ທີ່ຮັບໃຊ້ໃຫ້ແກ່ການຂົນສົ່ງຫຼາຍຮູບແບບ;

4. ກວດກາຜົນກະທົບຕໍ່ສິ່ງແວດລ້ອມ ເນື່ອງຈາກການເຄື່ອນໄຫວວຽກງານຂົນສົ່ງຫຼາຍຮູບແບບ.

**ມາດຕາ 54 ຮູບການການກວດກາວຽກງານຂົນສົ່ງຫຼາຍຮູບແບບ**

**ການກວດກາວຽກງານຂົນສົ່ງຫຼາຍຮູບແບບ ມີ ສາມ ຮູບການ ດັ່ງນີ້:**

1. ການກວດກາຢ່າງເປັນປົກກະຕິ ຊຶ່ງແມ່ນການກວດກາ ທີ່ດໍາເນີນໄປຕາມແຜນການຢ່າງເປັນປະຈໍາ ແລະ ມີການກໍານົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ, ບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການດໍາເນີນການກວດກາການຂົນສົ່ງຫຼາຍຮູບແບບນັ້ນ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍຢ່າງເຂັ້ມງວດ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 55 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານໃນການປະຕິບັດລະບຽບກົດໝາຍ ກ່ຽວກັບວຽກງານຂົນສົ່ງຫຼາຍຮູບແບບ ເປັນຕົ້ນ ດໍາເນີນການຂົນສົ່ງຫຼາຍຮູບແບບ ຢ່າງມີຄຸນນະພາບ, ຮັບປະກັນຄວາມປອດໄພ, ຄວາມສະດວກ, ຄວາມໂປ່ງໃສ, ຄວາມເປັນລະບຽບຮຽບຮ້ອຍ, ປົກປັກຮັກສາສິ່ງແວດລ້ອມໄດ້ດີ, ປະຕິບັດລາຄາຂົນສົ່ງຕາມລະບຽບການຢ່າງເຂັ້ມງວດ ຈະໄດ້ຮັບການຍ້ອງຍໍ ແລະ ການປະຕິບັດນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 56 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບວຽກງານຂົນສົ່ງຫຼາຍຮູບແບບ ເປັນຕົ້ນ ຂໍ້ຫ້າມ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດຕາມກົດໝາຍ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

**ມາດຕາ 57 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບວຽກງານຂົນສົ່ງຫຼາຍຮູບແບບ ເປັນຕົ້ນ ຂໍ້ຫ້າມທີ່ມີຄວາມເສັຍຫາຍເລັກໜ້ອຍ ແລະ ບໍ່ເປັນການກະທໍາຜິດທາງອາຍາ ຈະຖືກສຶກສາອົບຮົມ, ກ່າວເຕືອນ.

**ມາດຕາ 58 ມາດຕະການທາງວິໄນ**

ເຈົ້າໜ້າທີ່ ຫຼື ພະນັກງານຄຸ້ມຄອງວຽກງານຂົນສົ່ງຫຼາຍຮູບແບບ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບວຽກງານການຂົນສົ່ງຫຼາຍຮູບແບບ ເປັນຕົ້ນ ຂໍ້ຫ້າມທີ່ບໍ່ເປັນການກະທໍາຜິດທາງອາຍາ, ກໍ່ຄວາມເສັຍຫາຍບໍ່ຫຼວງຫຼາຍ ແລະ ບໍ່ຈິງໃຈລາຍງານການກະທໍາຜິດ, ຫຼົບຫຼີກຈາກຄວາມຜິດຂອງຕົນ ຈະຖືກປະຕິບັດຕາມລະບຽບການ ເຊັ່ນ ກ່າວເຕືອນຄວາມຜິດ, ໂຈະການເລື່ອນຂັ້ນ ຫຼື ຖືກໄລ່ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

**ມາດຕາ 59 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບວຽກງານຂົນສົ່ງຫຼາຍຮູບແບບ ຊຶ່ງໄດ້ກໍ່ຄວາມເສັຍຫາຍ ແຕ່ບໍ່ມີອົງປະກອບຂອງການກະທໍາຜິດທາງອາຍາ ຈະຖືກປັບໃໝ ໃນກໍລະນີ ດັ່ງນີ້:

1. ດໍາເນີນທຸລະກິດ ກ່ຽວກັບການຂົນສົ່ງຫຼາຍຮູບແບບ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ຖືກຕ້ອງຕາມປະເພດ ທີ່ໄດ້ຮັບການອະນຸຍາດ ຫຼື ທີ່ມີໃບອະນຸຍາດໝົດອາຍຸ;
2. ໃຫ້ເຊົ່າ ຫຼື ໂອນທະບຽນວິສາຫະກິດຂອງຕົນໃຫ້ຜູ້ອື່ນ;
3. ບັນຈຸ ຫຼື ບັນທຸກສິນຄ້າ ບໍ່ຖືກຕ້ອງຕາມລະບຽບການ;
4. ຄ່ຽນຖ່າຍສິນຄ້າ ບໍ່ຖືກ ສະຖານທີ່ ຫຼື ເວລາ ທີ່ກໍານົດ;
5. ນໍາໃຊ້ຍານພາຫະນະ ທີ່ບໍ່ມີໃບທະບຽນຖືກຕ້ອງ ຫຼື ບໍ່ໄດ້ມາດຕະຖານເຕັກນິກ;
6. ນໍາໃຊ້ໃບອະນຸຍາດຂອງຜູ້ອື່ນ ຫຼື ເອົາໃບອະນຸຍາດຂອງຕົນໃຫ້ຜູ້ອື່ນນໍາໃຊ້ ເພື່ອດໍາເນີນທຸລະກິດກ່ຽວກັບການຂົນສົ່ງຫຼາຍຮູບແບບ.

ອັດຕາການປັບໃໝ ໄດ້ກໍານົດໄວ້ໃນລະບຽບການສະເພາະ.

**ມາດຕາ 60 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບວຽກງານຂົນສົ່ງຫຼາຍຮູບແບບ ຊຶ່ງໄດ້ກໍ່ຄວາມເສຍຫາຍແກ່ຊັບສິນຂອງຜູ້ອື່ນ ຕ້ອງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 61 ມາດຕະການທາງອາຍາ**

ບຸກຄົນທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບວຽກງານຂົນສົ່ງຫຼາຍຮູບແບບ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 62 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 63 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງ ໜຶ່ງຮ້ອຍຊາວວັນ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້